# ການພັດທະນາທີ່ເຂົ້າໃຈຄວາມສ່ຽງ

***ການປະເມີນຄວາມເສຍຫາຍ, ການສູນເສຍ ແລະ ການກຳນົດຄວາມຕ້ອງການພາຍຫຼັງເກີດໄພພິບັດ ເປັນບາດກ້າວທຳອິດໃນການປ້ອງກັນ ແລະ ການຫຼຸດຜ່ອນຜົນກະທົບຈາກໄພ ທຳມະຊາດໃນອະນາຄົດ***

ພວກເຮົາສະເຫຼີມສະຫຼອງ ***ວັນສາກົນແຫ່ງການຫຼຸດຜ່ອນຄວາມສ່ຽງໄພພິບັດ*** ແລະ ***ວັນຄຸ້ມຄອງໄພພິບັດອາຊຽນ*** ໃນວັນທີ 13 ຕຸລາ ຂອງທຸກໆປີ. ຢູ່ ສປປ ລາວ ພາຍຫຼັງເກີດລົມພາຍຸເຊີນຕິນ ແລະ ເບບິນກາ ແລະ ນໍ້າຖ້ວມທົ່ວທຸກແຂວງ, ມື້ນີ້ຈຶ່ງເປັນໂອກາດດີໃຫ້ພວກເຮົາໄດ້ປູກຈິດສຳນຶກກ່ຽວກັບການຫຼຸດຜ່ອນຄວາມສ່ຽງໄພພິບັດ ໃນຂະນະດຽວກັນກໍ່ຮັກສາ ແລະ ສະໜັບສະໜູນການມີສ່ວນຮ່ວມຂອງໝົດທຸກຄົນ. ຫົວຂໍ້ຂອງວັນດັ່ງກ່າວໃນປີນີ້ແມ່ນ "*ຫຼຸດຜ່ອນຄວາມສູນເສຍດ້ານເສດຖະກິດພາຍຫຼັງເກີດໄພພິບັດ*" ເຊິ່ງເປັນສິ່ງທີ່ມີຄຸນຄ່າ,ມີຄວາມໝາຍຕໍ່ ສປປ ລາວ ຫຼາຍກວ່າທີ່ເຄີຍ.

ໜຶ່ງໃນສາມເງື່ອນໄຂ ສຳລັບການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2024 ນັ້ນ ກໍ່ຄືດັດຊະນີຄວາມອ່ອນໄຫວດ້ານເສດຖະກິດ ເຊິ່ງວັດແທກຄວາມເຂັ້ມແຂງດ້ານເສດຖະກິດໃນເວລາເສດຖະກິດຖືກແຮງກົດດັນ ແລະ ບໍ່ມີສະຖຽນລະພາບ. ສປປ ລາວ ມີໂອກາດທີ່ເປັນຮູບປະທຳທີ່ຈະບັນລຸເປົ້າໝາຍນີ້ ໂດຍການເຮັດໃຫ້ການຫຼຸດຜ່ອນຄວາມສ່ຽງໄພພິບັດ ເປັນສ່ວນໜຶ່ງຂອງເສັ້ນທາງແຫ່ງການພັດທະນາ.

ພວກເຮົາສະໜັບສະໜູນເປົ້າໝາຍນີ້ ໂດຍການຮ່ວມມືຢ່າງໃກ້ສິດກັບພາກສ່ວນກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ພ້ອມດຽວກັນກັບຊຸມຊົນໃນທ້ອງຖິ່ນ.

### *ສ້າງຄືນໃຫ້ດີກວ່າເກົ່າ*

ພາຍຫຼັງເກີດໄພພິບັດ, ຈຸດສຸມພື້ນຖານແມ່ນ ວິທີການຕອບສະໜອງຄວາມຕ້ອງການຂອງຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ຟື້ນຟູໂດຍໄວ ແລະ ມີປະສິດທິພາບ. ການກໍ່ສ້າງຄືນຕ້ອງໄດ້ໃຫ້ສອດຄ່ອງກັບຫຼັກການ *ສ້າງຄືນໃຫ້ດີກວ່າເກົ່າ*, ບໍ່ພຽງແຕ່ຮັບປະກັນວ່າຊີວິດການເປັນຢູ່ໃຫ້ໄດ້ຮັບການຟື້ນຟູຄືນເທົ່ານັ້ນ ແຕ່ຍັງລວມເຖິງການຫຼຸດຜ່ອນຄວາມສ່ຽງໄພພິບັດໃນອະນາຄົດນຳອີກ. ສິ່ງນັ້ນຈະຮັບປະກັນວ່າ ປະຊາຊົນມີຄວາມກຽມພ້ອມ ແລະ ມີຄວາມທົນທານຕໍ່ແຮງກົດດັນທີ່ຈະເກີດຂຶ້ນພາຍຫຼັງເກີດໄພພິບັດ.

ຫຼັກຖານສາກົນ ຊີ້ໃຫ້ເຫັນວ່າ ເມື່ອບັນດາປະເທດຕ່າງໆມີການສ້າງຄືນ ໃຫ້ແຂງແຮງຂຶ້ນ, ໄວຂຶ້ນ ແລະ ກວມລວມຂຶ້ນ, ປະເທດເຫຼົ່ານັ້ນສາມາດຫຼຸດຜ່ອນຂະໜາດຂອງຜົນກະທົບຂອງໄພພິບັດໃນອະນາຄົດຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນ. ໃນໄລຍະການຟື້ນຟູ ແລະ ການກໍ່ສ້າງຄືນພາຍຫຼັງເກີດໄພພິບັດ, ການຄຸ້ມຄອງຄວາມສ່ຽງສາມາດເຊື່ອມສານເຂົ້າໃນຫຼາຍຂະແໜງການ. ຕົວຢ່າງເຊັ່ນ ການຈັດຕັ້ງປະຕິບັດການຜະລິດກະສິກຳທີ່ມີຄວາມຢືດຢຸ່ນຕໍ່ກັບການປ່ຽນແປງດິນຟ້າອາກາດ, ການສ້າງພື້ນຖານໂຄງລ່າງທີ່ສຳຄັນ, ການເຊື່ອມສານການຄຸ້ມຄອງຄວາມສ່ຽງເຂົ້າໃນການຕັດສິນໃຈ ແລະ ການຈັດງົບປະມານສຳລັບການລົງທຶນ ແລະ ການສ້າງຄວາມເຂັ້ມແຂງດ້ານນະໂຍບາຍການຫຼຸດຜ່ອນຄວາມສ່ຽງ.

### *ການຮ່ວມມື ແລະ ນະວັດຕະກຳສຳລັບການຕອບໂຕ້ ແລະ ການຟື້ນຟູ*

ກ່ອນທີ່ການກໍ່ສ້າງຄືນຈະເລີ່ມຂຶ້ນ, ສິ່ງສຳຄັນແມ່ນການປະເມີນຄວາມເສຍຫາຍ, ການສູນເສຍ ແລະ ຄວາມຕ້ອງການ, ລວມໄປເຖິງຊັບພະຍາກອນທີ່ຈຳເປັນສຳລັບໄລຍະການຟື້ນຟູ. ລັດຖະບານແຫ່ງ ສປປ ລາວ ໄດ້ເລີ່ມຂະບວນການ *ປະເມີນຄວາມຕ້ອງການພາຍຫຼັງເກີດໄພພິບັດ* ໃນທົ່ວປະເທດໃນວັນທີ 24 ກັນຍາ ເພື່ອແຈ້ງກ່ຽວກັບການສ້າງຂອບແຜນວຽກຟື້ນຟູພາຍຫຼັງເກີດໄພພິບັດ. ຂອບແຜນວຽກດັ່ງກ່າວຈະຮັບປະກັນວ່າ ໄລຍະການຕອບໂຕ້ ສອດຄ່ອງກັບກິດຈະກຳການຟື້ນຟູໃນໄລຍະເບື້ອງຕົ້ນ, ໄລຍະກາງ

ແລະ ໄລຍະຍາວ ແລະ ອຳນວຍຄວາມສະດວກໃຫ້ແກ່ການສະໜັບສະໜູນຈາກສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ.

ການປະເມີນຄວາມສ່ຽງພາຍຫຼັງເກີດໄພພິບັດ ຈະເປັນໄປຕາມວິທີການທີ່ໄດ້ຮັບການທົດສອບເປັນຢ່າງດີ ເຊິ່ງສ້າງໂດຍກຸ່ມອົງການພັດທະນາແຫ່ງສະຫະປະຊາຊາດ, ທະນາຄານໂລກ ແລະ ສະຫະພາບເອີລົບ ແລະ ເປັນຮາກຖານກົນໄກການຮ່ວມມືລະຫວ່າງອົງການຕ່າງໆທີ່ມີຂີດຄວາມສາມາດຢ່າງຄົບຖ້ວນ. ນັ້ນລວມມີວິທີການທີ່ມີນະວັດຕະກໍາ ເຊັ່ນການຖ່າຍພາບຈາກດາວທຽມ ເພື່ອເກັບກໍາ “ຂໍ້ມູນຂະໜາດໃຫຍ່” ທີ່ສາມາດທໍາການວິເຄາະສະພາບພູມສາດ ແລະ ສະພາບອາກາດ. ຂະບວນການດັ່ງກ່າວແມ່ນນໍາພາໂດຍລັດຖະບານ ຄືກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ລວມເອົາທຸກພາກສ່ວນທີ່ກ່ຽວຂ້ອງ ໃນນັ້ນລວມໄປເຖິງກຸ່ມຄົນທີ່ມີວັດທະນະທໍາ ແລະ ສັງຄົມທີ່ມີຄວາມອ່ອນໄຫວ.

## *ການພັດທະນາທີ່ເຂົ້າໃຈຄວາມສ່ຽງ*

ເປົ້າໝາຍຮ່ວມກັນແມ່ນເພື່ອເຮັດໃຫ້ ສປປ ລາວ ສາມາດແກ້ໄຂ ແລະ ຈໍາກັດຜົນກະທົບຂອງໄພພິບັດທາງທໍາມະຊາດໃຫ້ດີຂຶ້ນ. ການທີ່ຈະບັນລຸເປົ້າໝາຍນີ້ ແມ່ນຮຽກຮ້ອງໃຫ້ມີການເຊື່ອມສານການຄຸ້ມຄອງຄວາມສ່ຽງ ເຂົ້າກັບຂະແໜງການທີ່ມີຄວາມອ່ອນໄຫວ, ການສ້າງຄວາມເຂັ້ມແຂງດ້ານການກະກຽມຮັບມື ແລະ ການສໍາຫລວດທາງດ້ານການເງິນຢ່າງມີນະວັດຕະກໍາ ເຊັ່ນກົນໄກປະກັນຄວາມສ່ຽງໄພພິບັດ. ການລົງທຶນໃສ່ການສ້າງຄວາມຢືດຢຸ່ນມີຜົນດີໃນຫຼາຍລະດັບເຊັ່ນ: ສາມາດຊ່ວຍຊີວິດ ແລະ ຫຼຸດຜ່ອນຂະໜາດຂອງການທໍາລາຍ ແລະ ຄວາມສູນເສຍ. ນອກຈາກນັ້ນ, ຍັງເປັນການສ້າງຜົນປະໂຫຍດຮ່ວມໃນດ້ານອື່ນນໍາອີກ ເຊັ່ນວ່າການປັບປຸງຄຸນນະພາບຂອງການພັດທະນາ ແລະ ການສົ່ງເສີມວິທີການທີ່ມີຍືນຍົງ ເພື່ອຕ້ານຜົນກະທົບຂອງການປ່ຽນແປງດິນຟ້າອາກາດ.

ການປະຕິບັດວຽກງານພາກສະໜາມໃນຂະບວນການປະເມີນຄວາມຕ້ອງການພາຍຫຼັງເກີດໄພພິບັດ ແມ່ນກໍາລັງດໍາເນີນໄປໃນຂອບເຂດທົ່ວປະເທດໃນປະຈຸບັນ ໂດຍສຸມໃສ່ແຂວງທີ່ໄດ້ຮັບຜົນກະທົບທີ່ໜັກທີ່ສຸດ. ຜົນການປະເມີນຄາດວ່າຈະໄດ້ຮັບໃນທ້າຍເດືອນຕຸລາ ແລະ ຈະໄດ້ແຈ້ງໃນກອງປະຊຸມປຶກສາຫາລືລະດັບສູງກ່ຽວກັບການວາງແຜນລະດັບຊາດ ແລະ ການຊ່ວຍເຫຼືອການພັດທະນາຂອງສາກົນ.

ໄພທໍາມະຊາດ ບໍ່ແມ່ນໄພພິບັດ. ໄພທໍາມະຊາດສາມາດກໍ່ໃຫ້ເກີດຄວາມຫາຍະນະ ແລະ ກາຍເປັນໄພພິບັດ ເມື່ອຄົນເຮົາມີຄວາມສ່ຽງ. ເຖິງຢ່າງໃດກໍ່ຕາມ, ການວາງແຜນການພັດທະນາທີ່ເຂົ້າໃຈຄວາມສ່ຽງ ສາມາດຮັບປະກັນວ່າ ຄວາມສ່ຽງຕໍ່ໄພທໍາມະຊາດຖືກຈໍາກັດ. ສະນັ້ນ, ໃນທາງດຽວກັນ, ກໍຈະເພີ່ມຄວາມເຂັ້ມແຂງຂອງ ປະຊາຊົນແຫ່ງ ສປປ ລາວ ເພື່ອວ່າໂສກນາດຕະກໍາທີ່ເກີດຂຶ້ນເມື່ອບໍ່ດົນມານີ້ ໄດ້ຮັບການຈໍາກັດລົງເທົ່າທີ່ຈະສາມາດເຮັດໄດ້.

*ບົດຄວາມນີ້ ຖືກຂຽນໂດຍອົງການສະຫະປະຊາຊາດ, ທະນາຄານໂລກ ແລະ ສະຫະພາບເອີຣົບ ປະຈໍາ ສປປ ລາວ.*



*ທ່ານ ນ. ຄາຣິນາ ອິມໂມເນັນ ແມ່ນຜູ້ປະສານງານຂອງອົງການສະຫະປະຊາຊາດ ແລະ ທັງເປັນຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາປະຈໍາ ສປປ ລາວ. ທ່ານໄດ້ເລີ່ມເຂົ້າເຮັດວຽກຢູ່ອົງການສະຫະປະຊາຊາດໃນປີ 1991 ແລະ ເຮັດວຽກໃນ ສປປ ລາວ ຕັ້ງແຕ່ປີ 2014.*



*ທ່ານ ນິໂຄລາ ພອນຕາຣາ ແມ່ນຜູ້ຈັດການທະນະຄານໂລກ ປະຈຳ ສປປ ລາວ. ທ່ານໄດ້ເລີ່ມເຮັດວຽກຢູ່ໃນທະນາຄານໂລກໃນປີ 2000, ແລະ ເຮັດວຽກປະຈຳຢູ່ ສປປ ລາວ ຕັ້ງແຕ່ເດືອນກໍລະກົດໃນປີນີ້. ທ່ານສຳເລັດການສຶກສາປະລິນຍາເອກດ້ານເສດຖະສາດ ຈາກມະຫາວິທະຍາໄລ ລອນດອນ.*



*ທ່ານ ລີໂອ ເຟເບີ ແມ່ນເອກອັກຄະລັດຖະທູດສະຫະພາບເອີຣົບ ປະຈຳ ສປປ ລາວ ແລະ ໄດ້ເຮັດວຽກຢູ່ລາວຕັ້ງແຕ່ປີ 2016. ທ່ານໄດ້ສຳເລັດການສຶກສາປະລິນຍາໂທດ້ານປັດສະຍາດ້ານວັດທະນະທຳຈີນ, ພາສາຈີນເດີມ ແລະ ສະໄໝໃໝ່ ແລະ ປະຫວັດສາດເອີຣົບ.*